ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

----------------------------

ກະຊວງສາທາລະນະສຸກ

ກົມແຜນການ ແລະ ການເງິນ

ເລກທີ 4314 /ກຜງ

ນະຄອນຫຼວງວຽງຈັນ,ວັນທີ 20 AUG 2026

## ໜັງສືເຊີນເຂົ້າຮ່ວມປະມູນ

1. ກົມແຜນການ ແລະ ການເງິນ ກະຊວງສາທາລະນະສຸກ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນວຸດທິເໝາະສົມ ເຂົ້າຍື່ນຊອງປະມູນ ສໍາລັບ ການກໍ່ສ້າງ-ສ້ອມແປງ :
   - ຫ້ອງນໍ້າສາທາລະນະ ພາຍໃນໂຮງໝໍ ໄລຍະເວລາກໍ່ສ້າງ-ສ້ອມແປງ 3 ເດືອນ;
   - ມຸງຫຼັງຄາ ຊັ້ນ 5 ( ຈຸດເຊື່ອມຕໍ່ ຕຶກ 5 ຊັ້ນ ແລະ 8 ຊັ້ນ ) ໄລຍະເວລາກໍ່ສ້າງ-ສ້ອມແປງ 2 ເດືອນ.
2. ການປະມູນຈະດໍາເນີນຕາມຂັ້ນຕອນການປະມູນເປີດກວ້າງທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ,ສະບັບເລກທີ 30/ສພຊ,ລົງວັນທີ 2 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ ອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄຸນນະວຸທິເໝາະສົມ.ມີໃບອະນຸຍາດດໍາເນີນທຸລະກິດ ຊັ້ນ 1 ແລະ ຊັ້ນ 2 ຖືກຕ້ອງຕາມກົດໝາຍທີ່ກ່ຽວພັນກັບການກໍ່ສ້າງ-ສ້ອມແປງດັ່ງກ່າວ;
4. ບໍລິສັດທີ່ມີຄຸນນະວຸດທິເໝາະສົມ ສົນໃຈສາມາດຕິດຕໍ່ພົວພັນໄດ້ທີ່ ພະແນກຕິດຕາມ-ກວດກາ ແລະ ປະເມີນຜົນ ກົມແຜນການ ແລະ ການເງິນ ກະຊວງສາທາລະນະສຸກ;
5. ບໍລິສັດໃດທີ່ຕ້ອງການຊື້ເອກະສານປະມູນຄົບຊຸດ ຊຸດລະ 1,000,000 ກີບ ຕ້ອງຍື່ນໜັງສືສະເໜີຫາ ຕາມທີ່ຢູ່ຂ້າງລຸ່ມນີ້ :

   ກົມແຜນການ ແລະ ການເງິນ, ກະຊວງສາທາລະນະສຸກ ບ້ານທາດຂາວ, ຖະໜົນສີເມືອງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ.ເລີ່ມແຕ່ວັນທີ 20 ສິງຫາ 2026 ເປັນຕົ້ນໄປ ໃນໂມງລັດຖະການ ໂທ **020 55698683**;
6. ທຸກໆຊອງປະມູນຕ້ອງໄດ້ເຮັດໜັງສືຄໍ້າປະກັນດ້ວຍກຽດ;
7. ຊອງປະມູນທຸກໆຊອງຈະໄດ້ເປີດໃນເວລາ 14 ໂມງ 00 ນາທີ ຂອງວັນທີ 24 / 09 / 2026 ຢູ່ທີ່ຫ້ອງປະຊຸມ ຊັ້ນ 4 ກົມແຜນການ ແລະ ການເງິນ ໂດຍຊ້ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ເຂົ້າແຂ່ງຂັນປະມູນທີ່ສົນໃຈຢາກເຂົ້າຮ່ວມ;

ຮອງຫົວໜ້າກົມ ຫົວໜ້າກົມ

ກົມແຜນການ ແລະ ການເງິນ

ປະຊຸມພົນ ທໍາມະໂລງຊາດ

Pasouniphon THAMMARONGSAD